ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການ

ເລກທີ 1686 /ກຜທ.ຫກ5

ນະຄອນຫຼວງວຽງຈັນ, ວັນທີ 11 ມິຖຸນາ 2024

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ ກະຊວງແຜນການ ແລະ ການລົງທຶນ ຂໍເຊີນບັນດາບໍລິສັດ, ຫ້າງ/ຮ້ານ ທີ່ສົນໃຈ ແລະມີເງື່ອນໄຂຄົບຖ້ວນ ເຂົ້າຍື່ນຊອງປະມູນ ສໍາລັບການສະໜອງ ແລະ ຕິດຕັ້ງອຸປະກອນຄວາມປອດໄພ ຂອງກະຊວງແຜນການ ແລະ ການລົງທຶນ ປີ 2024.
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນ ກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນ ທີ່ດໍາເນີນທຸລະກິດຢູ່ ນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ.
4. ບໍລິສັດ, ຫ້າງ/ຮ້ານທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອກະສານປະມູນຄົບຊຸດໄດ້ທີ່ພະແນກເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ຫ້ອງການ ກະຊວງແຜນການ ແລະ ການລົງທຶນ (ໂທລະສັບ:021 251256,020 5555 3594) ສໍານັກງານຕັ້ງຢູ່ຖະໜົນສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-12:00 ໂມງ ແລະ 13:30-16:00 ໂມງ, ນັບແຕ່ວັນທີ 13 ມິຖຸນາ 2024 ຫາ ວັນທີ 17 ກໍລະກົດ 2024 ລາຄາຊອງປະມູນ ຊອງລະ 200.000 ກີບ (ສອງແສນກີບຖ້ວນ) ເງິນຈໍານວນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ.
5. ກໍານົດສົ່ງຊອງປະມູນ ຕ້ອງສົ່ງໃຫ້ ພະແນກເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ຫ້ອງການ ກະຊວງແຜນການ ແລະ ການລົງທຶນກ່ອນເວລາ 13:00 ໂມງ ຂອງວັນທີ 18 ກໍລະກົດ 2024, ຖ້າຊອງປະມູນໃດສົ່ງຊ້າກວ່າເວລາທີ່ກໍານົດໄວ້ ຈະບໍ່ຮັບເອົາ ແລະຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ. ກໍານົດເປີດຊອງປະມູນແມ່ນເວລາ 14:00 ໂມງ ຂອງວັນທີ 18 ກໍລະກົດ 2024 ທີ່ຫ້ອງປະຊຸມ A1-1 ກະຊວງ ແຜນການ ແລະ ການລົງທຶນ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນມາພ້ອມໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ຍື່ນຊອງປະມູນ). ໜັງສືຄໍ້າປະກັນການປະມູນ ຕ້ອງແມ່ນໜັງສືຄໍ້າປະກັນຂອງທະນາຄານ ທີ່ຖືກຕ້ອງກັບແບບຟອມທີ່ກໍານົດໄວ້ຢູ່ໃນເອກະສານປະມູນ.

ຫົວໜ້າຫ້ອງການ

ກະຊວງແຜນການແລະການລົງທຶນ

ຫ້ອງການ

ອຸຕະແກ້ວ ແກ້ວດວງສິນ

สแกนด้วย CamScanner